ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 25 ຕຸລາ ຫາ 01 ພະຈິກ 2024




ສະເຫຼີມສະຫຼອງວັນອາຫານໂລກ, ວັນສາກົນ ແລະ ສັບປະດາແຫ່ງຊາດ
ເພື່ອລຶບລ້າງຄວາມທຸກຍາກ ປະຈຳປີ 2024

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ສະເຫຼີມສະຫຼອງວັນອາຫານໂລກ, ວັນສາກົນ ແລະ ສັບປະດາແຫ່ງຊາດ ເພື່ອລຶບລ້າງຄວາມທຸກຍາກ ປະຈຳປີ 2024

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ໃນວັນທີ 23 ຕຸລາ ນີ້ ທີ່ສູນການຄ້າພາກຊັນ ນະຄອນຫຼວງວຽງຈັນ, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຈັດພິທີ ສະເຫຼີມສະຫຼອງວັນອາຫານໂລກ, ວັນສາກົນ ແລະ ສັບປະດາແຫ່ງຊາດ ເພື່ອລຶບລ້າງຄວາມທຸກຍາກ ປະຈຳປີ 2024 ຂຶ້ນ. ໃຫ້ກຽດເຂົ້າຮ່ວມໃນພິທີ ໂດຍ ທ່ານ ພົນເອກ ວິໄລ ຫຼ້າຄຳຟອງ ຮອງນາຍົກລັດຖະມົນຕີ, ທ່ານ ລິນຄຳ ດວງສະ ຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ທ່ານ ນາງ ມາດິນ ເທເລີ ຜູ້ຕາງໜ້າ ອົງການສະຫະປະຊາຊາດ ເພື່ອການ ພັດທະນາ (UNDP) ປະຈຳ ສປປ ລາວ, ທ່ານ ນາງ ຄະຍອງ ມີ ຄິມ ຜູ້ຕາງໜ້າ ອົງການ ອາຫານ ແລະ ການກະເສດ (FAO) ປະຈຳ ສປປ ລາວ, ບັນດາທ່ານ ເອກອັກຄະລັດຖະທູດ, ທູຕານຸທູດ ແລະ ຄູ່ຮ່ວມພັດທະນາ.

ໃນພິທີທ່ານ ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ກ່າວວ່າ: ໂລກຂອງພວກເຮົາໄດ້ປະເຊີນກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຕ່າງໆ ເຊັ່ນ: ການປ່ຽນແປງທາງດ້ານດິນຟ້າອາກາດຂອງໂລກ, ໄພພິບັດທາງທຳມະຊາດ, ໄພນ້ຳຖ້ວມ-ໄພແຫ້ງແລ້ງ, ການລະບາດຂອງພະຍາດ, ຂໍ້ຂັດແຍ່ງຕ່າງໆໃນບາງພູມິພາກ ເຮັດໃຫ້ລາຄາສິນຄ້າ, ວັດຖຸ-ອຸປະກອນ ແລະ ນ້ຳມັນເຊື້ອໄຟສູງຂຶ້ນ ພ້ອມທັງສິ່ງຜົນກະທົບຕໍ່ປະຊາກອນໂລກ ປະສົບກັບຄວາມອຶດຫິວ, ຂາດສານອາຫານຫຼາຍກວ່າ



800 ລ້ານຄົນ ແລະ ມີທ່າອ່ຽງເພີ່ມຂຶ້ນສູງແຕ່ລະປີ, ເຫັນໄດ້ບັນຫາດັ່ງກ່າວ, ອົງການອາຫານ ແລະ ການກະເສດ ຂອງສະຫະປະຊາຊາດ ໄດ້ກຳນົດເອົາ ວັນທີ 16 ຕຸລາ ຂອງທຸກປີ ເປັນວັນອາຫານໂລກ, ເລີ່ມແຕ່ ປີ 1980 ເປັນຕົ້ນມາ ແລະ ອົງການສະຫະປະຊາຊາດ ກໍໄດ້ກຳນົດເອົາ ວັນທີ 17 ຕຸລາ ເປັນວັນສາກົນເພື່ອລຶບລ້າງຄວາມທຸກຍາກ ເລີ່ມແຕ່ ປີ 1992 ເປັນຕົ້ນມາ, ເຫັນໄດ້ຄວາມສຳຄັນຂອງງານດັ່ງກ່າວ ລັດຖະບານແຫ່ງ ສປປ ລາວ ກໍໄດ້ກຳນົດເອົາ ວັນທີ 17-24 ຕຸລາ ເປັນສັບປະດາແຫ່ງຊາດ ເພື່ອລຶບລ້າງຄວາມທຸກຍາກ ເລີ່ມແຕ່ປີ 2003 ເປັນຕົ້ນມາ; ການໂຮມຊຸມນຸມຄັ້ງນີ້ ແມ່ນມີຄວາມໝາຍຄວາມສຳຄັນບໍ່ສະເພາະແຕ່ແນໃສ່ປູກຈິດສຳນຶກ ໃຫ້ປະຊາຊົນໃນທົ່ວໂລກເຂົ້າໃຈເຖິງຄວາມທຸກຍາກ ແລະ ໄພພຶດຫິວ. "ຄວາມທຸກຍາກນີ້ແມ່ນປະກົດການທາງສັງຄົມ ທີ່ສາມາດແກ້ໄຂໄດ້" ໃຫ້ປະຊາຊົນມີກຳລັງໃຈ, ມີຄວາມກ້າຫານ ແລະ ສາມາດບິນຕົວອອກຈາກຄວາມທຸກຍາກ ແລະ ໄພອຶດຫິວໄດ້. ພ້ອມນີ້ກໍຖືໂອກາດນີ້ ສ້າງຄວາມຮັບຮູ້ ແລະ ຮຽກຮ້ອງໃຫ້ທຸກພາກສ່ວນ ມີສ່ວນຮ່ວມໃນການຜະລິດອາຫານ ທີ່ຫຼາກຫຼາຍ, ມີຄຸນນະພາບ ແລະ ຍືນຍົງ.

ໃນໂອກາດທີ່ມີຄວາມໝາຍສຳຄັນນີ້, ກະຊວງກະສິກຳ ແລະ ປ່າໄມ້ ຮ່ວມກັບອົງການອາຫານ ແລະ ການກະເສດ ໄດ້ຈັດງານເພື່ອສະເຫຼີມສະຫຼອງວັນອາຫານໂລກ ພາຍໃຕ້ຄຳຂວັນທີ່ວ່າ "ສິດໃນການເຂົ້າເຖິງອາຫານ ເພື່ອຊີວິດ ແລະ ອະນາຄົດ ທີ່ດີຂຶ້ນເພື່ອໃຫ້ພວກເຮົາພ້ອມກັນກ້າວໄປໜ້າ ແລະ ລະນຶກເຖິງວັນສາກົນ ແລະ ສັບປະດາແຫ່ງຊາດ ເພື່ອລຶບລ້າງຄວາມທຸກຍາກ ພາຍໃຕ້ຄຳຂວັນ: "ຢຸດຕິການປະຕິບັດທີ່ບໍ່ຖືກຕ້ອງ ຂອງສັງຄົມ ແລະ ສະຖາບັນຕໍ່ຜູ້ທຸກຍາກ, ຈົ່ງຮ່ວມກັນ ສ້າງສັງຄົມທີ່ມີສ່ວນຮ່ວມ, ມີຄວາມສະຫງົບສຸກ ແລະ ຍຸຕິທຳ"

ການສະເຫຼີມສະຫຼອງວັນອາຫານໂລກ ຄັ້ງທີ 44 ແລະ ການລະນຶກວັນສາກົນ ເພື່ອລຶບລ້າງ ຄວາມທຸກຍາກ ຄົບຮອບ 32 ປີ ໃນປີ 2024 ນີ້ ແມ່ນຢູ່ໃນໄລຍະເວລາທີ່ທົ່ວພັກ ທົ່ວລັດທົ່ວສັງຄົມ ພວມຈັດຕັ້ງ

ປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ແຫ່ງລັດ ຄັ້ງທີ IX; ຜັນຂະຫຍາຍຈັດຕັ້ງປະຕິບັດເນື້ອໃນກອງປະຊຸມ ສະຫຼຸບຕີລາຄາວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດຮອບດ້ານ ແລະ ວຽກງານ 3 ສ້າງ ທີ່ຜ່ານມາ. ເນື່ອງໃນໂອກາດດັ່ງກ່າວ, ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ເຊີນຊວນທຸກພາກສ່ວນໃນທົ່ວໂລກ ຮ່ວມແຮງຮ່ວມໃຈ ສຸມທຸກທຶນຮອນ, ສະຕິປັນຍາ, ເຕັກໂນໂລຊີທັນສະໄໝ ເຂົ້າໃນການຜະລິດສະບຽງອາຫານ ໂດຍສະເພາະ ຮ່ວມແຮງ ໃນເຂດທີ່ມີຄວາມທຸກຍາກ ໃຫ້ຫຼຸດພົ້ນຈາກໄພອຶດຫິວດັ່ງກ່າວ ແລະ ພ້ອມທັງຖືໂອກາດນີ້ ເຊີນຊວນບັນດາທ່ານ ມີສ່ວນຮ່ວມບໍລິຈາກທຶນຮອນຕາມຄວາມເໝາະສົມ ແລະ ເງື່ອນໄຂສະດວກ ເຂົ້າໃນການຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ໂພຊະນາການ ແລະ ແກ້ໄຂຄວາມທຸກຍາກ, ທຶນດັ່ງກ່າວ ແມ່ນຈະໄດ້ນຳໃຊ້ເຂົ້າໃນການຈັດຫາແນວພັນພືດ ແລະ ແນວພັນສັດ ເພື່ອຊ່ວຍເຫຼືອປະຊາຊົນ ທີ່ຖືກຜົນກະທົບຈາກການລະບາດຂອງສັດຕູພືດ, ພະຍາດສັດ, ໄພນ້ຳຖ້ວມ ແລະ ອື່ນໆ.




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;